ພັນທະມິຕເພື່ອປະຊາທິປະໄຕໃນລາວ

ALLIANCE FOR DEMOCRACY IN LAOS

Alliance pour la Démocratie au Laos

Letmather Str.71, 58119 Hagen, Germany. Phone: 0049( 2334) 44 44 668, E-Mail: alliance-lao@alice.de

www.laoalliance.org


# ຖະແລງການ ພປລ ສນັບສນູນຂະບວນການປະທ້ວງ ຂອງປະຊາຊົນພະມ້າ

ທີ່ເຢັຽຣະມັນວັນທີ່ 18, ກຸມພາ 2021

ພວກເຮົາ ອົງການ ພັນທະມິຕເພື່ອປະຊາທິປະໄຕໃນລາວ ( ພປລ) ທີ່ເປັນການຈັດຕັ້ງທີ່ເຄືອນໄຫວໃນຢູ່ທົ່ວໂລກ ເພື່ອສິດທິມະນຸດ ແລະປະຊາທິປະໄຕໃນລາວ ທີ່ມີສູນກາງຕັ້ງຢູ່ປະເທດເຢັຽຣະມັນ ພ້ອມທັງຄົນລາວທຸກຄົນທີ່ຕໍ່ສູ້ ເພື່ອ ປະຊາທິປະໄຕ ແລະ ຄວາມເປັນທັມ , ພວກເຮົາ ຂໍສະແດງຄວາມໄມຕຣີຈິຕ ແລະ ສນັບສນູນຢ່າງສຸດໃຈ ຕໍ່ຂະບວນການປະທ້ວງ ແບບສັນຕິວິທີ ຂອງປະຊາຊົນຊາວພະມ້າ ທີ່ລຸກຂຶ້ນມາ ຕໍ່ສູ້ ຢ່າງເປັນຂະບວນ ອັນແໜ້ນໜາ ຈາກທຸກຂະແໜງການ ໃນທົ່ວປະເທດ ເພື່ອປະຊາທິປະໄຕ ແລະ ສິດທິມະນຸດ .

ພວກເຮົາເຫັນວ່າ ການລັດຖະປະຫານຂອງຜະເດັດການທະຫານ ພະມ້າ ໃນວັນທີ 1 ກຸມພາປີ 2021 ເປັນການກະທຳ ທີ່ບໍ່ມີຄວາມຍຸດຕິທັມ, ເປັນ ການທຳລາຍປະຊາທິປະໄຕ ແລະ ສິດທິມະນຸດ ຢ່າງຮ້າຍແຮງ.ການ. ກ່າວຫາຂອງຝ່າຍຜະເດັດ ການທະຫານທີ່ຍຶດອຳນາດ ທີ່ກ່າວວ່າ ມີການໂກງໃນການເລືອກຕັ້ງ ຜ່ານມານັ້ນ ແມ່ນ ບໍ່ ສາມາດພິສູດຄວາມຈິງໄດ້. ນາຍພົນ Min Aung Hlaing ບໍ່ໄດ້ມີຄວາມສົນໃຈຕໍ່ປະຊາທິປະໄຕ ຫລື ຕໍ່ປະຊາຊົນພະມ້າ ເລີຍ. ການກໍ່ລັດຖະປະຫານ ຄັ້ງນີ້ ແມ່ນມີຈຸດປະສົງພຽງແຕ່ເພື່ອ ສະກັດກັ້ນ ຝ່າຍປະຊາທິປະໄຕໃນພະມ້າທີ່ ເປັນອຸປະສັກອຸປະສັກ ຕໍ່ການສໍ້ລາດບັງຫຼວງ ຂອງຝ່າຍຜະເດັດການທະຫານນັ້ນເອງ.

ພວກເຮົາ ສນັບສນູນ ຖະແລງການ ຂອງສະຫະລັດອາເມລິກາ, ການາດາ, ອົດສະຕາລີ, ນິວຊີແລນ, ສະຫະພາບເອີຣົບ, ອັງກິດ ແລະ ສະວິສເຊີແລນ ກ່ຽວກັບການທວງໃຫ້ປ່ອຍຕົວທ່ານນາງອອງຊານ ຊູຈີ ແລະ ນັກການເມືອງອື່ນໆ ແລະ ທວງໃຫ້ ການກັບຄືນສູ່ລະບຽບກົດໝາຍ . ພວກເຮົາ, ພປລ, ສນັບສນູນ ຄຳຕັດສິນລົງໂທດ ຂອງເລຂາທິການໃຫຍ່ສະຫະປະຊາຊາດທ່ານ António Guterres ແລະ ສະພາແຫ່ງຊາດຂອງຕີມໍຕາເວັນອອກ ຕໍ່ການກໍ່ລັດຖະປະຫານຂອງຜະເດັດການທະຫານພະມ້າ ໃນຄັ້ງນີ້.

1) ພວກເຮົາທວງໃຫ້ຜູ້ນຳຜະເດັດການທະຫານພະມ້າ ຈົ່ງປ່ອຍຕົວນັກໂທດການເມືອງທຸກຄົນ, ບັນດາ ຜູ້ ນຳ ການເມືອງ ແລະ ຕົວນັກຂ່າວ ທຸກຄົນ ທີ່ຖືກຈັບກຸມໃຫ້ມີອິສສະຣະພາບ ຢ່າງຮີບດ່ວນ.

2) ພວກເຮົາທວງ ໃຫ້ຮັບຮູ້ຜົນຂອງການເລືອກຕັ້ງສະພາ ຄັ້ງສຸດທ້າຍ ແລະ ການຟື້ນຟູການບໍລິຫານພົນລະເຮືອນໃນທຸກຂົງເຂດໃນພະມ້າ.

3) ພວກເຮົາທວງ ໃຫ້ຜູ້ ນຳຜະເດັດການ ທະຫານໃນພະມ້າ ຕ້ອງຍຸດຕິ ການໃຊ້ຄວາມຮຸນແຮງຕໍ່ປະຊາຊົນ ທີ່ລຸກຂຶ້ນມາຕໍ່ສູ້ ແບບສັນຕິວິທີ ເພື່ອ ປະຊາທິປະໄຕ ແລະປົກປ້ອງສິດທິຂອງເຂົາເຈົ້າ.

4) ພວກເຮົາທວງ ໃຫ້ຜູ້ ນໍາ ຜະເດັດການທະຫານພະມ້າ ຈົ່ງຢຸດຕິການ ຈໍາ ກັດຂ່າວສານຕ່າງໆ .

5) ພວກເຮົາຮຽກຮ້ອງໃຫ້ ບັນດາຣັຖະບານ ໃນກຸ່ມອາຊຽນ ແລະ ຕີມໍຕາເວັນອອກຈົ່ງຮ່ວມມື ກັນເພື່ອແກ້ໄຂບັນຫາ ພະມ້າ ຢ່າງຈິງຈັງ ແລະ ທັນການ, ຕາມການສເນີຂອງ ຣັຖະບານ ມາເລ ເຊຍ ແລະ ອິນໂດເນເຊຍ.

ດ້ວຍຄວາມນັບຖື




ປະທານ ພັນທະມິດເພື່ອປະຊາທິປະໄຕໃນລາວ
ດຣ.ບຸນທອນ ຈັນທະລາວົງ-ວີເຊີ

**Office in Germany: Dr. Bounthone Chanthalavong- Wiese,** President, Letmather Str.71, 58119 Hagen, Germany
Phone: +49-2334-44 44 668, Email: chanthalavong@aol.com
**France:** **Mr.Somphet Vatthanou** Vice-President , 2 AV Combattant en a.f.n.69140, Rillieux La Pape,
Phone: +33-6-15192201, s.vatthanou@gmail.com
**USA:** **Ms.Khamphene Souvannasane,** regional president, ADL chapter of USA , 3837 Rusty Dell St.,
Fortworth, TX 76111, Phone:+1-682- 554- 6675 , Email: khamhene@yahoo.com
**Canada:** **Mr.Kambane Anonthisen,** regional president, ADL chapter of Canada, 84 Highgatz Rord Kichener , ONT,
Phone:+1-519-58 80 502, email: khambane@hotmail.com
**Australia:** **Mr.Pheng Sacksady**, regional president, ADL chapter of Australia, 6 Quambone Place,Isabella Plains A.C.T,
Phone+61-41 37 66 216, Email: pheng-sone52@gmail.com.au
**New Zealand:** **Mr. Somchine Sithivong,** regional president, ADL chapter of New Zeeland**,** 6 Ropata Cres, Lower Hutt.
5010 Wellington,phone: +64- 49 34 86 35, E-Mail: xsittivong24@gmail.com